ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 25/ນຍ
ນະຄອນຫຼວງວຽງຈັນ, ວັນທີ 16 / 09 / 25

# ຄຳສັ່ງ
# ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ

ເຖິງ: ບັນດາທ່ານ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ແລະ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ ສະບັບເລກທີ 41/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ກົດໝາຍວ່າດ້ວຍສັດປ່າ ສະບັບເລກທີ 42/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ສິ່ງແວດລ້ອມ ສະບັບເລກທີ 0809/ກສ, ລົງວັນທີ 26 ສິງຫາ 2025.

ເພື່ອເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງ, ສະກັດກັ້ນ, ຕ້ານ ແລະ ແກ້ໄຂປະກົດການຫຍໍ້ທໍ້ ກ່ຽວກັບ ການ ລ່າ, ລ້ຽງ, ຂະຫຍາຍພັນ, ມີໄວ້ໃນຄອບຄອງ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ໃຫ້ສອດຄ່ອງຕາມກົດໝາຍ, ລະບຽບການທີ່ລັດຖະບານໄດ້ວາງອອກ, ສົນທິສັນຍາສາກົນວ່າດ້ວຍການຄ້າຂາຍ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES) ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ.

## ນາຍົກລັດຖະມົນຕີ ອອກຄຳສັ່ງ:

1. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເພີ່ມທະວີຄວາມເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍສະເພາະແມ່ນ ບັນດາກົດໝາຍ, ລະບຽບການ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ຕໍ່ກັບວຽກງານ ຄຸ້ມຄອງ, ສະກັດກັ້ນ, ຕ້ານ ແລະ ແກ້ໄຂ ປະກົດການຫຍໍ້ທໍ້ ກ່ຽວກັບ ການ ລ່າ, ລ້ຽງ, ຂະຫຍາຍພັນ, ມີໄວ້ໃນຄອບຄອງ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ;

2. ຫ້າມ ລ່າ, ລ້ຽງ, ຂະຫຍາຍພັນ, ມີໄວ້ໃນຄອບຄອງ, ຄ້າຂາຍ, ນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ ແລະ ສັດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ທີ່ຢູ່ໃນບັນຊີ I ຂອງ ສປປ ລາວ ແລະ ໄຊເຕັດ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ;

3. ໃຫ້ຢຸດຕິ ການສ້າງຕັ້ງ ຟາມສັດປ່າ ທີ່ຢູ່ໃນ ບັນຊີ I ຂອງ ສປປ ລາວ ແລະ ໄຊເຕັດ ເພື່ອເປົ້າໝາຍທາງດ້ານທຸລະກິດ. ສຳລັບ ຟາມສັດປ່າ ທີ່ຢູ່ໃນ ບັນຊີ I ຂອງ ສປປ ລາວ ແລະ ໄຊເຕັດ (CITES) ທີ່ມີແລ້ວ ໃຫ້ຫັນໄປເປັນ ສວນສັດປ່າ ເພື່ອເປົ້າໝາຍການທ່ອງທ່ຽວແບບອະນຸລັກ ແລະ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດເທົ່ານັ້ນ;

4. ໃຫ້ດຳເນີນການແກ້ໄຂບັນຫາ ຟາມສັດປ່າ ແລະ ສວນສັດປ່າ ທີ່ລ້ຽງເສືອ ໂດຍໃຫ້ປິດຟາມລ້ຽງເສືອ ທີ່ມີໃນປັດຈຸບັນ ຢ່າງເດັດຂາດ ຫຼື ຫັນໄປເປັນ ສວນສັດປ່າ ແລະ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

- 4.1 ໃຫ້ຄຸ້ມຄອງ ແລະ ກວດກາຟາມລ້ຽງເສືອ ລວມທັງການວິເຄາະຕົວຢ່າງ ທາງດ້ານພັນທຸກຳ (DNA) ເສືອ ແລະ ຮູບພາບລາຍເສືອ ເພື່ອຊ່ວຍໃນການກຳນົດຕົວຢ່າງເສືອແຕ່ລະໂຕ;
- 4.2 ໃຫ້ກຳນົດ ຕົວຢ່າງພັນທຸກຳ (DNA) ເສືອ ຊະນິດພັນເຂດແຫຼມອິນດູຈີນ (Panthera tigris corbetti) ໃນແຕ່ລະຟາມສັດປ່າ ຫຼື ສວນສັດປ່າ ແລະ ຊຸກຍູ້ໃຫ້ ຜູ້ປະກອບການ ມີສ່ວນຮ່ວມໃນການສົມທົບກັບ ໜ່ວຍງານວິທະຍາສາດໄຊເຕັດ ແລະ ໜ່ວຍງານຄຸ້ມຄອງໄຊເຕັດ ເພື່ອຂະຫຍາຍພັນສຳລັບການອະນຸລັກຊະນິດພັນສັດປ່າດັ່ງກ່າວ;
- 4.3 ປະຕິບັດມາດຕະການ ຈຳກັດຈຳນວນເສືອ ໂດຍຈຳກັດ ການຂະຫຍາຍພັນຂອງເສືອໃນຟາມ (ເຮັດໝັນ, ແຍກໂຕຜູ້ ແລະ ໂຕແມ່);
- 4.4 ໃຫ້ຢຸດຕິ ການອະນຸຍາດ ນຳເຂົ້າເສືອທີ່ມີຊີວິດ, ຍົກເວັ້ນ ຊະນິດພັນເສືອເຂດແຫຼມອິນດູຈີນ (Panthera Tigris corbetti) ເພື່ອຈຸດປະສົງ ການຂະຫຍາຍພັນ ແບບອະນຸລັກ;
- 4.5 ສ້າງຖານຂໍ້ມູນລະບົບຄຸ້ມຄອງເສືອ ເພື່ອຕິດຕາມ ການເພີ່ມຂຶ້ນ ຫຼື ຫຼຸດລົງຂອງຈຳນວນເສືອຢູ່ບັນດາຟາມສັດປ່າ, ສວນສັດປ່າ ແລະ ສູນຟື້ນຟູສຸຂະພາບສັດປ່າ;
- 4.6 ໃນກໍລະນີ ເສືອຕາຍ ຕ້ອງປະຕິບັດຕາມມາດຕະຖານຂັ້ນຕອນ ການທຳລາຍຊາກເສືອ ທີ່ໄດ້ກຳນົດໄວ້ ໃນແຕ່ລະໄລຍະ.

5. ໃຫ້ດຳເນີນການແກ້ໄຂບັນຫາ ຟາມສັດປ່າ ແລະ ສວນສັດປ່າ ທີ່ລ້ຽງລີງຫາງຍາວ ແລະ ລີງອອກ ດັ່ງນີ້:

- 5.1 ໂຈະ ການອອກໃບອະນຸຍາດ ນຳເຂົ້າ, ສົ່ງອອກ, ສົ່ງອອກຄືນ ແລະ ສົ່ງຜ່ານ ລີງຫາງຍາວ ແລະ ລີງອອກ ແລ້ວໃຫ້ດຳເນີນຂະບວນການຢັ້ງຢືນແຫຼ່ງທີ່ມາ ຂອງລີງຫາງຍາວ ແລະ ລີງອອກ ທີ່ມີຢູ່ໃນບັນດາຟາມສັດປ່າ, ລວມທັງ ລີງຫາງຍາວ ແລະ ລີງອອກ ທີ່ໄດ້ມາຈາກປ່າທຳມະຊາດ ເພື່ອຂະຫຍາຍພັນຕາມຄຳແນະນຳ ຂອງກອງເລຂາໄຊເຕັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແລ້ວສະເໜີຕໍ່ຄະນະປະຈຳໄຊເຕັດ ພິຈາລະນາຄືນ;
- 5.2 ດຳເນີນຂະບວນການຢັ້ງຢືນ ແຫຼ່ງທີ່ມາຂອງ ພໍ່ພັນ-ແມ່ພັນ ລີງຫາງຍາວ ແລະ ລີງອອກ ທີ່ມີຢູ່ໃນບັນດາຟາມສັດປ່າ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ (LAF: Legal Acquisition Finding).

6. ຫ້າມບໍ່ໃຫ້ມີການຄ້າຂາຍ ແລະ ສົ່ງອອກ, ນຳເຂົ້າ ພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

7. ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການຄົ້ນຄວ້າ ສົ່ງເສີມ ການຂະຫຍາຍພັນພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ ແລະ ການຄຸ້ມຄອງບັນດາສວນພືດປ່າທີ່ໃກ້ຈະສູນພັນ ລະຫວ່າງຊາດ;

8. ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ໃນການປະຕິບັດມາດຕະການຄຸ້ມຄອງ ສັດນ້ຳ ແລະ ສັດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ ດັ່ງນີ້:

- 8.1. ດຳເນີນການສຳຫຼວດ, ຂຶ້ນທະບຽນ ແລະ ແຈ້ງບັນຊີ ຊິ້ນສ່ວນງາຊ້າງລ້ຽງ ທີ່ມີການຢັ້ງຢືນແຫຼ່ງທີ່ມາຖືກຕ້ອງ ແລະ ສອດຄ່ອງ ຕາມກົດໝາຍ ແລະ ລະບຽບການ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງມີໄວ້ໃນຄອບຄອງ;

8.2. ເຂັ້ມງວດໃນການກວດກາ ລາດຕະເວນ ຕາມ ຕະຫຼາດ, ຮ້ານອາຫານ, ຮ້ານຄ້າ, ເຂດຊາຍແດນທີ່ຫຼໍ່ແຫຼມ, ດ່ານຂາເຂົ້າ-ຂາອອກ, ເຂດເສດຖະກິດພິເສດ ສະຖານີຂົນສົ່ງ ທາງບົກ, ທາງລົດໄຟ, ທາງນ້ຳ, ທາງອາກາດ ແລະ ເຂດອື່ນ ທີ່ມີເປົ້າໝາຍ, ຖ້າມີການລະເມີດ ຫຼື ການກະທຳຜິດກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ ໃຫ້ດຳເນີນການສືບສວນ-ສອບສວນ ເພື່ອດຳເນີນຄະດີຕໍ່ຜູ້ກະທຳຜິດ, ໃນກໍລະນີມີການຍຶດຂອງກາງ ເພື່ອດຳເນີນຄະດີ ຕ້ອງມອບໃຫ້ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ດຳເນີນການສືບສວນ-ສອບສວນ ຕາມທີ່ກຳນົດໄວ້ໃນກົດໝາຍ;

8.3. ການຮິບຂອງກາງ ຖ້າເປັນສັດນ້ຳ, ສັດປ່າ ຫຼື ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ອັນໃດທີ່ສາມາດເກັບຮັກສາໄວ້ ພາຍຫຼັງການດຳເນີນຄະດີສິ້ນສຸດ ຕ້ອງມອບໃຫ້ໜ່ວຍງານຄຸ້ມຄອງໄຊເຕັດ ເປັນຜູ້ເກັບຮັກສາໄວ້, ອັນໃດທີ່ບໍ່ສາມາດເກັບຮັກສາໄວ້ໄດ້ ຕ້ອງແຕ່ງຕັ້ງຄະນະກຳມະການເພື່ອແກ້ໄຂຕາມລະບຽບການ;

8.4. ໃຫ້ ຍຶດ ຫຼື ອາຍັດ ຜະລິດຕະພັນ ສັດປ່າ ເຊັ່ນ ຊ້າງ, ເສືອ, ໝີ ແລະ ຊະນິດອື່ນ ທີ່ເປັນການລັກລອບຄ້າຂາຍ ລວມທັງ ຂອງຮຽນແບບ ຫຼື ເປັນຂອງປອມ ຊຶ່ງມີວາງຂາຍຕາມສະຖານທີ່ຕ່າງໆ ຕາມທີ່ກຳນົດໄວ້ໃນກົດໝາຍ;

8.5. ສືບຕໍ່ກວດກາ, ຄຸ້ມຄອງ, ຂຶ້ນບັນຊີ, ຮິບໂຮມ ເຄື່ອງມືລ່າສັດປ່າ ແລະ ເຄື່ອງມືຫາສັດນ້ຳ ທີ່ມີລັກສະນະດັບສູນທຸກຊະນິດ ເພື່ອທຳລາຍຖິ້ມ. ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຜະລິດ, ຄອບຄອງ ແລະ ຈຳໜ່າຍ ເຄື່ອງມືລ່າສັດປ່າ ແລະ ເຄື່ອງມືຫາສັດນ້ຳ ທີ່ມີລັກສະນະດັບສູນທຸກຊະນິດ.

9. ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການ ໃນການປະສານກັບ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ດຳເນີນການກວດກາ, ຂຶ້ນບັນຊີ ບຸກຄົນ ຫຼື ກຸ່ມຄົນ ເປົ້າໝາຍ ເພື່ອສະກັດກັ້ນ ແລະ ຕ້ານ ການຄ້າຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ເຊັ່ນ ກະດູກ, ໜັງ, ເຂົາ, ງາຊ້າງ, ນໍ, ແຂ້ວ, ເລັບ, ເກັດ, ໝວດ, ບີ ແລະ ອື່ນໆ ຢູ່ບັນດາຕະຫຼາດ, ໂຮງແຮມ, ເຂດເສດຖະກິດພິເສດ, ເຂດທ່ອງທ່ຽວ, ສະໜາມບິນ, ສະຖານີລົດໄຟ, ບໍລິສັດຂົນສົ່ງ, ດ່ານຂາເຂົ້າ-ຂາອອກ ລະຫວ່າງປະເທດ ແລະ ສະຖານທີ່ອື່ນ ລວມທັງ ການຄ້າຂາຍທາງອອນລາຍ;

10. ໃຫ້ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເພີ່ມທະວີຄວາມເຂັ້ມງວດ ແລະ ເອົາໃຈໃສ່ປະຕິບັດໜ້າທີ່ ຕາມຂອບເຂດສິດ ແລະ ຄວາມຮັບຜິດຊອບ ໃຫ້ຖືກຕ້ອງຕາມ ກົດໝາຍ ແລະ ນິຕິກຳ ທີ່ກ່ຽວຂ້ອງກັບ ການດຳເນີນການກວດກາ ລາດຕະເວນ ແລະ ການດຳເນີນຄະດີ ການຄ້າຂາຍສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນໃນທ້ອງຖິ່ນ ຂອງຕົນ;

11. ໃຫ້ກະຊວງປ້ອງກັນປະເທດ ແລະ ກະຊວງປ້ອງກັນຄວາມສະຫງົບ ຊີ້ນຳສາຍຕັ້ງຂອງຕົນ ເພີ່ມທະວີຄວາມເຂັ້ມງວດ ໃນການ ຕິດຕາມ, ກວດກາ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຢູ່ຕາມບັນດາດ່ານຕ່າງໆ ແລະ ຕາມຊາຍແດນລະຫວ່າງປະເທດ, ຫ້າມເຈົ້າໜ້າທີ່ອະນຸຍາດ ຫຼື ອຳນວຍຄວາມສະດວກ ໃຫ້ແກ່ ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງ ຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ຢ່າງເດັດຂາດ, ຖ້າກວດກາພົບເຫັນມີການລັກລອບ ໃຫ້ດຳເນີນການຈັບຕົວຜູ້ກະທຳຜິດ ພ້ອມທັງຍຶດຂອງກາງ ແລ້ວສົ່ງໃຫ້ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

12. ໃຫ້ກະຊວງການເງິນ ຊີ້ນຳເຈົ້າໜ້າທີ່ພາສີ ເພີ່ມທະວີຄວາມເຂັ້ມງວດ ໃນການກວດກາ, ສະກັດກັ້ນ ແລະ ຕ້ານ, ການຄ້າຂາຍ, ເຄື່ອນຍ້າຍ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ ທີ່ໄດ້ມາຈາກທຳມະຊາດ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ສົນທິສັນຍາສາກົນ ທີ່ກ່ຽວຂ້ອງ, ຖ້າກວດກາພົບເຫັນມີການລັກລອບ ໃຫ້ດຳເນີນການຈັບຕົວຜູ້ກະທຳຜິດ ພ້ອມທັງຍຶດຂອງກາງ ແລ້ວສົ່ງໃຫ້ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ດຳເນີນຄະດີຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ;

13. ຫ້າມອົງການສືບສວນ-ສອບສວນ ດຳເນີນການແກ້ໄຂທາງດ້ານບໍລິຫານ ຕໍ່ກັບຜູ້ກະທຳຜິດທາງດ້ານອາຍາ ກ່ຽວກັບການຄ້າຂາຍ, ເຄື່ອນຍ້າຍ, ການນຳເຂົ້າ, ສົ່ງອອກ ແລະ ສົ່ງຜ່ານ ສັດນ້ຳ, ສັດປ່າ ແລະ ພືດປ່າ ລວມທັງຊາກ, ຊິ້ນສ່ວນ ແລະ ຜະລິດຕະພັນ;

14. ໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການ ສົມທົບກັບ ກະຊວງກະສິກຳ ແລະ ສິ່ງແວດລ້ອມ ແລະ ອົງການປົກຄອງທ້ອງຖິ່ນ ດຳເນີນການສຶກສາຄວາມຢູ່ລອດ (NDF: Non-Detrimental Finding) ຂອງ ຊະນິດພັນ ສັດນ້ຳ, ສັດປ່າ ແລະ ພືດປ່າ ເພື່ອໃຫ້ຮູ້ໄດ້ເຖິງສະຖານະພາບຂອງແຕ່ລະຊະນິດພັນ ເພື່ອເປັນພື້ນຖານໃນການ ອອກໃບອະນຸຍາດໄຊເຕັດ ແລະ ສະເໜີການປ່ຽນແປງບັນຊີໄຊເຕັດ ໃນກອງປະຊຸມປະເທດພາຄີ (COP: Conference of Parties);

15. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເອົາໃຈໃສ່ປັບປຸງ ກົນໄກ ປະສານງານ ໃນການຄຸ້ມຄອງ, ກວດກາ ແລະ ຕິດຕາມ ການຈັດຕັ້ງປະຕິບັດ ສົນທິສັນຍາສາກົນ ທີ່ກ່ຽວຂ້ອງ;

16. ໃຫ້ກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບ ບັນດາ ກະຊວງ, ອົງການລັດທຽບເທົ່າ ກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ທຸກຂັ້ນ ເພີ່ມທະວີຄວາມເອົາໃຈໃສ່ ໂຄສະນາ, ເຜີຍແຜ່ ກົດໝາຍ ແລະ ສົນທິສັນຍາສາກົນ ທີ່ກ່ຽວຂ້ອງ ພ້ອມທັງຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ ແລ້ວລາຍງານ ລັດຖະບານ ຢ່າງເປັນປົກກະຕິ;

17. ໃຫ້ບັນດາ ລັດຖະມົນຕີ, ຫົວໜ້າອົງການລັດທຽບເທົ່າກະຊວງ ແລະ ປະທານຄະນະກຳມະການປົກຄອງ ນະຄອນຫຼວງ, ແຂວງ ກຳແໜ້ນ ຄຳສັ່ງສະບັບນີ້, ພ້ອມທັງຜັນຂະຫຍາຍອອກເປັນໜ້າວຽກລະອຽດ ຕາມຄວາມຮັບຜິດຊອບຂອງຕົນ ໂດຍໄວ ແລະ ຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນ, ກໍລະນີຂະແໜງການໃດ, ທ້ອງຖິ່ນໃດ ຫາກລະເມີດຕໍ່ຄຳສັ່ງ ສະບັບນີ້ ແມ່ນຄະນະນຳ ຂອງຂະແໜງການນັ້ນ ຫຼື ທ້ອງຖິ່ນນັ້ນ ຕ້ອງຮັບຜິດຊອບຕາມກົດໝາຍ;

18. ຄຳສັ່ງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ໃຫ້ປ່ຽນແທນ ຄຳສັ່ງວ່າດ້ວຍການ ເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ສະບັບເລກທີ 05/ນຍ, ລົງວັນທີ 08 ພຶດສະພາ 2018.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ